# ກອງປະຊຸມຄົ້ນຄວ້າປັບປຸງຮ່າງກົດໝາຍ ວ່າດ້ວຍການສ່າງນິຕິກຳ ຄັ້ງວັນທີ 15-16 ມີຖຸນາ 2021 ທີ່ທ່າລາດ ແຂວງວຽງຈັນ.

ລັດຖະບານໄດ້ກຳນົດຫຼັກການ ແລະ ວິທີປະຕິບັດທີ່ຈັດເຈນເພື່ອນຳໃຊ້ເຂົ້າໃນການສ້າງກົດໝາຍຂອງ ສປປ ລາວ ເພື່ອຮັບປະກັນການອອກລະບຽບການທີ່ມີປະສິດທິພາບ ດັ່ງທີກອງປະຊຸມຄົ້ນຄວ້າປັບປຸງຮ່າງກົດໝາຍ ວ່າດ້ວຍການສ່າງນິຕິກຳ ເຊີ່ງໄດ້ຮ່ວມຈັດຕັ້ງໂດຍກະຊວງຍຸດຕິທຳ ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ UNDP ກ່ຽວກັບຮ່າງກົດໝາຍວ່າດ້ວຍການສ້າງນິຕິກຳນີ້ເພື່ອເຮັດໃຫ້ຂະບວນການ ໃນການສ້າງກົດໝາຍມີຄວາມເປັນເອກະພາບ, ສອດຄ່ອງ ແລະ ມີປະສິດທິພາບທັງສອດຄອງກັບວິທີການສ້າງກົດໝາຍຕາມວິທີປະຕິບັດຂອງສາກົນ.

ກອງປະຊຸມດັ່ງກ່າວດຳເນີນຂຶ້ນໃນວັນທີ 15-16 ກໍລະກົດ ທີ່ທ່າລາດ ແຂວງວຽງຈັນ ພາຍໃຕ້ການເປັນປະທານຂອງ ທ່ານ ກົງຈີຢ່າງຈື ຮອງລັດຖະມົນຕີກະຊວງຍຸດຕິທຳ ຮ່ວມກັບ ທ່ານ ນາງ ຣິຄາດາ ຣິເກີ Ricarda Rieger ຜູ້ຕ່າງໜ້າອົງການສະຫະປະຊາຊາດເພື່ອການພັດທະນາ ທີ່ໄດ້ກ່າວມີຄຳເຫັນຕໍ່ກອງປະຊູມຜ່າງທາງອອນລາຍ ດ້ວຍເງື່ອນໄຂສະພາບການລະບາດຂອງພະຍາດໂຄວິດ 19. ກອງກະຊູມຄັ້ງນີ້ແມ່ນໄດ້ປະຕິບັດຕາມຄຳຊີ້ນຳຂອງລັດຖະບານ ກ່ຽວກັບການຈັດກອງປະຊູມທີ່ມີການຮັກສາໄລຍະຫ່າງ ໂດຍມີຜູ້ເຂົ້າຮ່ວມຈຳນວນ 20 ທ່ານ ທີ່ເປັນຕົວແທນຈາກອົງການຂອງຕົນເຂົ້າຮ່ວມກອງປະຊຸມ ພ້ອມຜູ້ຕາງໜ້າຈາກຫຼາຍພາກສ່ວນ ເປັນຕົ້ນແມ່ນ ບັນດາຫົວໜ້າກົມ ແລະ ຮອງຫົວໜ້າກົມຂອງກະຊວງຍຸຕິທຳ ສະມາຊິກຈາກສະພາແຫ່ງຊາດ ແລະ ຊ່ຽວຊານຈາກ UNDP.

ຮ່າງກົດໝາຍວ່າດ້ວຍການສ້າງນິຕິກຳແມ່ນໄດ້ດຳເນີນການໃນການປຶກສາຫາລື ແລະ ແກ້ໄຂຜ່ານມາແລ້ວ. ແຕ່ກອງປະຊຸມຄັ້ງນີ້ ແມ່ນຖືເປັນໂອກາດໃນການປຶກສາຫາລື ກັບບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຕໍ່ກັບເນື້ອໃນທີ່ຈະມີການປ່ຽນແປງສຸດທ້າຍ ພ້ອມທັງຮັບເອົາຄຳແນະນຳ ດ້ານວິຊາການຈາກຊ່ຽວຊານ UNDP ແລະ ຮັບຟັງການມີຄຳເຫັນຈາກສະມາຊິກສະພາບແຫ່ງຊາດເພື່ອແນ່ໃສ່ການພິຈາລະນາ ແລະ ຮັບຮອງໃນຂັ້ນສະພາຕໍ່ໄປ. ນອກນີ້ທັງເປັນການກຳນົດວາລະ ກອງປະຊູມສະໄໝສາມັນຂອງສະພາແຫ່ງຊາດຄັ້ງທີ 2 ຂອງສະພາແຫ່ງຊາດຊຸດທີ 9.

ຈຸດປະສົງຕົ້ນຕໍຂອງກອງປະຊຸມແມ່ນເພື່ອສະຫຼຸບຮ່າງກົດໝາຍວ່າດ້ວຍການສ້າງນິຕິກໍາ ຮ່ວມກັບບັນດາຜູ້ຕ່າງໜ້າຈາກກະຊວງຍຸດຕິທໍາ ແລະ ສະພາແຫ່ງຊາດ ເຊິ່ງຜູ້ເຂົ້າຮ່ວມໄດ້ ຊອກຫາແນວທາງໃນການປັບປຸງເອກສານກ່ຽວກັບການຈັດຕັ້ງປະຕິບັດກົດໝາຍສະ ບັບນີ້ ພ້ອມທັງຊອກແນວທາງໃນການປະຕິບັດທີ່ສ້າງສັນເຂົ້າໃນການປຶກສາຫາລື ແລະ ການນໍາສະເໜີກົດໝາຍຈາກຕ່າງປະເທດທີ່ໄດ້ຮັບຜົນທີ່ດີ ໂດຍຊ່ຽວຊານ UNDP.

ການກ່າວມີຄໍາເຫັນຂອງ ທ່ານ ກົງຈິ ຢ່າງຈື ໄດ້ເນັ້ນໃຫ້ເຫັນເຖິງບົດບາດສໍາຄັນຂອງສະພາ ແຫ່ງຊາດໃນການຮັບເອົາຮ່າງກົດໝາຍສະບັບສຸດທ້າຍນີ້ ໂດຍກ່າວວ່າ ໜຶ່ງໃນຈຸດປະສົງ ຫຼັກຂອງການປະຊູມຄັ້ງນີ້ ແມ່ນເພື່ອຮັບເອົາຄໍາເຫັນຈາກສະມາຊິກຄະນະກໍາມະການ ຮັບ ຜິດຮອບດ້ານກົດໝາຍຂອງສະພາແຫ່ງຊາດ. ທ່ານຍັງໄດ້ຊຸກຍູ້ໃຫ້ບບັນດາຜູ້ເຂົ້າຮ່ວມທຸກ ທ່ານ ມີການປະກອບຄໍາເຫັນ ເພື່ອໃຫ້ກະຊວງຍຸດຕິທໍາ ສາມາດລະບຸຂົງເຂດຂອງປະເດັ່ນທີ່ ຍັງຄົງຂ້າງ ເພື່ອເປັນການເສີ່ມສ້າງຮ່າງກົດໝາຍນີ້ໃຫ້ມີຄວາມສົມບູນ ພ້ອມຍັງໄດ້ກ່າວສະ ແດງຄວາມຂອງໃຈຕໍ່ຜູ້ເຂົ້າຮ່ວມກອງປະຊຸມ ແລະ ຕໍ່ອົງການ UNDP ທີ່ສະໜັບສະໜູນການ ຈັດກອງປະຊຸມຄັ້ງນີ້ ແລະ ຫວັງຢ່າງຍິ່ງວ່າດ້ວຍການສະໜັບສະໜູນຈາກ UNDP ຕະຫຼອດມາ ຈະເຮັດໃຫ້ຮ່າງກົດໝາຍວ່າດ້ວຍການສ້າງນິຕິກໍາໄດ້ຖືກຮັບຮອງໂດຍສະພາແຫ່ງຊາດດ້ວຍ ຜົນສໍາເລັດ.

ທ່ານ ນາງ ນາງ ຣິຄາດາ ຣິເກີ ຜູ້ຕ່າງໜ້າຈາກອົງການ UNDP ປະກອບຄໍາເຫັນໃນພາກເຊົ້າ ຄື ດັ່ງນີ້: ບາດກ້າວອັນສໍາຄັນຂອງການກ້າວໄປສູ່ວິທີປະຕິບັດຂອງສາກົນທີ່ດີ ໄດ້ສະທ້ອນໃຫ້ ເຫັນໃນກົດໝາຍຂອງ ສປປ ລາວ ຜ່ານການປັບປຸງກົດໝາຍວ່າດ້ວຍການສ້າງນິຕິກໍາ. ຮ່າງກົດໝາຍສະບັບນີ້ ກວມເອົາບັນດາຫລັກການທີ່ສໍາຄັນ ເຊິ່ງໃນນັ້ນລວມມີການເສີມ ຂະຫຍາຍການມີສ່ວນຮ່ວມຂອງພາກສ່ວນຕ່າງໆ, ການດໍາເນີນການປະເມີນຜົນກະທົບ ຂອງບັນດາກົດໝາຍ ແລະ ການຮັບປະກັນການທົບທວນກົດໝາຍພາຍຫຼັງປະກາດໃຊ້ ແລ້ວ. ເຖິງຢ່າງໃດກໍຕາມ, ເພື່ອໃຫ້ການປັບປຸງບັນດາກົດໝາຍ ມີປະສິດຕິຜົນຢ່າງແທ້ຈິງ ຕ້ອງຮັບປະກັນວ່າ ບັນດາກົດໝາຍອື່ນໆ ສາມາດກໍານົດຢ່າງລະອຽດ ຮູບແບບການຈັດຕັ້ງ ປະຕິບັດກົດໝາຍວ່າດ້ວຍການສ້າງນິຕິກໍາສະບັບນີ້.

ກອງປະຊຸມຄັ້ງນີ້ໄດ້ຈັດຂື້ນຮ່ວມກັນລະຫວ່າງກະຊວງຍຸດຕິທຳ ແລະ ອົງການ UNDP ພາຍໃຕ້ ໂຄງການການສະໜັບສະໜູນຍຸດທະສາດການສ້າງຄວາມເຂັ້ມແຂງລັດປົກຄອງດ້ວຍກົດໝາຍໃນ ສປປ ລາວ (3S-RoL), ດ້ວຍຈຸດປະສົງເພື່ອພັດທະນາກົດໝາຍ. ອົງການ UNDP ໄດ້ເຮັດວຽກຢ່າງໃກ້ຊິດກັບ ກະຊວງຍຸດຕິທຳ ກ່ຽວກັບຂະບວນການພັດທະນາກົດໝາຍ, ລວມທັງການເຜີຍແຜ່ການສຶກສາຂັ້ນພື້ນຖານໃນການສ້າງກົດໝາຍໃນປີ 2015, ເຊິ່ງເປັນການສຶກສາຄົ້ນຄ້ວາທີ່ສົມບູນແບບຄັ້ງທຳອິດໃນຂະບວນການສ້າງກົດໝາຍໃນ ສປປ ລາວ ເຊິ່ງບົດລາຍງານດັ່ງກ່າວປະກອບມີຂໍ້ສະເໜີແນະສຳລັບຜູ້ຮ່າງກົດໝາຍ ເພື່ອໃຫ້ປະຊາຊົນສາມາດມີການປະກອບສ່ວນຕໍ່ຮ່າງກົດໝາຍຕ່າງໆຜ່ານຊ່ອງທາງອອນລາຍ, ມີການຈັດຕັ້ງ ການປຶກສາຫາລື ແບບສາທາລະນະ, ແລະ ໄດ້ປັບປຸງບົດບັນທຶກການອະທິບາຍ ພ້ອມທັງບົດລາຍງານການປະເມີນຜົນກະທົບທັງໝົດ ເຊິ່ງສະແດງເຖິງຫຼັກການທີ່ສຳຄັນຂອງ ວິທີປະຕິບັດຂອງສາກົນທີ່ດີ. ນອກນີ້, ຍັງສະແດງເຖິງຮ່າງການປະກອບຕໍ່ກົດໝາຍສະບັບນີ້ພາຍໃຕ້ການປຶກສາຫາລືຂອງກອງປະຊຸມ.

ຂໍ້ມູນເພີ່ມເຕີມສາມາດຕິດຕໍ່ພົວພັນກັບທີມງານ ຫຼື ອົງການ UNDP ໄດ້ທີ່ຊ່ອງທາງຕິດຕໍ່ລຸ່ມນີ້:

ທ່ານ ນາງ ອັກສອນທິບ ສົມວໍລະຈິດ ຫົວໜ້າໜ່ວຍງານການສື່ສານ UNDP

Email: aksonethip.somvorachit@undp.org

Contact number: 020 5502 1550